ພາກຕາເວັນຕົກສ່ຽງເຫນືອປາຊິຟິກ
ຫ້ອງການພາກ
Edith Green-Wendell Wyatt Federal Building
1220 S.W. 3rd Avenue
Portland, OR 97204 www.fs.usda.gov/r6

ຖະແຫຼງຂ່າວ

ຜູ້ຕິດຕໍ່: **Glen Sachet, 503-808-2790**
Aleta Eng, 425-783-6017

22 ມີຖຸນາ 2015

ປ່າສະຫງວນແຫ່ງຊາດໃນ Washington ແລະ Oregon ໃຫ້ບໍລິການລ່ານແປພາສາທາງໂທລະສັບ "ຕາມການຮ້ອງຂໍ"

Portland, Ore. ພາກຕາເວັນຕົກສ່ຽງເຫນືອປາຊິຟິກຂອງຫນ່ວຍບໍລິການປ່າໄມ້ (Forest Service) ຂອງກະຊວງ USDA ໄດ້ປະກາດການບໍລິການລ່ານແປພາສາທາງໂທລະສັບ "ຕາມການຮ້ອງຂໍ" ແບບທົດລອງ ເພື່ອເພີ່ມທະວີການບໍລິການສາທາລະນະໃຫ້ແກ່ຜູ້ທີ່ບໍ່ເວົ້າພາສາອັງກິດ.

ການບໍລິການທົດລອງນີ້ແມ່ນຜົນໂດຍກົງຈາກການເອົາໃຈໃສ່ຂອງທາງພາກໃນການໃຫ້ບໍລິການທີ່ລວມເອົາທຸກຄົນ ແລະສາມາດເຂົ້າເຖິງໄດ້ຕໍ່ກັບຊຸມຊົນທີ່ເຂົາເຈົ້າຮັບໃຊ້.

ທ່ານ Jim Peña, ເຈົ້າຫນ້າທີ່ປ່າໄມ້ຂອງພາກຕາເວັນຕົກສ່ຽງເຫນືອປາຊິຟິກ ກ່າວວ່າ "ພວກເຮົາມຸ້ງຫມັ້ນທີ່ຈະປັບປຸງການເຂົ້າເຖິງຂອງປະຊາຊົນຕໍ່ກັບບັນດາໂຄງການບໍລິການດ້ານປ່າໄມ້ ເພື່ອສົ່ງເສີມການຕິດຕໍ່ພົວພັນທີ່ສະແດງຄວາມເຄົາລົບ ແລະລວມເອົາທຸກຄົນ ກັບປະຊາຊົນ ແລະຊຸມຊົນທີ່ພວກເຮົາຮັບໃຊ້". "ປ່າສະຫງວນແຫ່ງຊາດ ແລະທົ່ງຫຍ້າຂອງພວກເຮົາ ແມ່ນແຫຼ່ງຄວາມສວຍງາມ ແລະແຮງບັນດານໃຈ, ແລະເປັນຂອງພວກເຮົາທຸກຄົນ. ພວກເຮົາຕ້ອງການຮັບປະກັນໃຫ້ທຸກຄົນມີການເຂົ້າເຖິງຂໍ້ມູນຂ່າວສານທີ່ພວກເຂົາຕ້ອງການ ເພື່ອມີສ່ວນຮ່ວມຢ່າງເຕັມສ່ວນ".

ຄວາມຄ່ອງແຄ້ວດ້ານພາສາອັງກິດທີ່ຈຳກັດສາມາດຂັດຂວາງການມີສ່ວນຮ່ວມຢ່າງເຕັມສ່ວນໃນບັນດາໂຄງການຂອງລັດຖະບານກາງ ລວມທັງຂະບວນການຕັດສິນໃຈ, ການເຂົ້າເຖິງການບໍລິການທີ່ສຳຄັນ, ແລະການເຂົ້າໃຈ ຫຼືການໃຊ້ສິດທິຕ່າງໆ. ໂດຍປະມານແລ້ວ 1 ໃນ 5 ຄົນໃນທົ່ວປະເທດ ມີຄວາມຄ່ອງແຄ້ວດ້ານພາສາອັງກິດທີ່ຈຳກັດ. ພາກຕາເວັນຕົກສ່ຽງເຫນືອປາຊິຟິກ ມີຈຸດປະສົງກຳຈັດອຸປະສັກດ້ານພາສາທີ່ມີຕໍ່ກັບບຸກຄົນຜູ້ທີ່, ອັນເປັນຜົນຈາກປະເທດກຳເນີດຂອງເຂົາເຈົ້າ, ມີຄວາມສາມາດອ່ານ, ຂຽນ, ເວົ້າ ຫຼືເຂົ້າໃຈພາສາອັງກິດໄດ້ຈຳກັດ.

ການບໍລິການທາງໂທລະສັບໃຫມ່ນີ້ສະເຫນີໃຫ້ການແປພາສາໃນທັນທີຢູ່ບັນດາຫ້ອງການຂອງຫນ່ວຍບໍລິການປ່າໄມ້, ຢູ່ສູນຕ້ອນຮັບແຂກ ແລະຢູ່ນອກສະຖານທີ່ ໃນເວລາທີ່ການບໍລິການທາງໂທລະສັບມີໃຫ້ ໃນທົ່ວປ່າສະຫງວນແຫ່ງຊາດໃນ Washington ແລະ Oregon. ແຂກຍ້ຽມຢາມຈະຖືກຮ້ອງຂໍໃຫ້ບອກພາສາຂອງເຂົາເຈົ້າ, ແລະພະນັກງານຫນ່ວຍບໍລິການປ່າໄມ້ຈະໂທຫາຜູ້ຊ່ຽວຊານດ້ານການແປພາສາ. ສັນຍາທົດລອງທີ່ເຊັນກັບ TransPerfect ສະຫນອງການບໍລິການລ່ານແປພາສາສຳລັບ 170 ພາສາ. ຂໍ້ມູນການໂທຈະຖືກປະເມີນ ເພື່ອກຳນົດຄວາມຕ້ອງການສຳລັບການບໍລິການໃນອະນາຄົດ.

ພາກຕາເວັນຕົກສ່ຽງເຫນືອປາຊິຟິກ ປະກອບມີປ່າສະຫງວນແຫ່ງຊາດ 16 ແຫ່ງ, ຫ້ອງການເມືອງ 59 ຫ້ອງການ, ເຂດທົ່ອທັດແຫ່ງຊາດຫນຶ່ງແຫ່ງ, ແລະເຂດທົ່ງຫຍ້າແຫ່ງຊາດຫນຶ່ງແຫ່ງ. ຫນ່ວຍຄຸ້ມຄອງເຫຼົ່ານີ້ປະກອບມີເນື້ອທີ່ 24.7 ລ້ານເອເຄີໃນ Oregon ແລະ Washington ແລະວ່າຈ້າງພະນັກງານປະມານ 3,550 ຄົນ. ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບຫນ່ວຍບໍລິການປ່າໄມ້ຂອງກະຊວງ USDA ໃນພາກຕາເວັນຕົກສ່ຽງເຫນືອປາຊິຟິກ, ກະລຸນາເຂົ້າເບິ່ງ http://www.fs.usda.gov/r6.

ເພື່ອສິ່ງທີ່ດີທີ່ສຸດ

###